## ມິຊຊາອາທິດທີ 18 ກຳນົດທຳມະດາ ປີ B
## ວັນທີ 1 ສິງຫາ 2021



**ພຣະວໍລະສານໂດຍນັກບຸນຢວງ 6, 24-35**

ເມື່ອຝູງຊົນເຫັນວ່າພຣະເຢຊູເຈົ້າ ແລະພວກລູກສິດບໍ່ຢູ່ທີ່ນັ້ນ, ພວກເຂົາຈຶ່ງພາກັນລົງເຮືອກັບເມືອເມືອງກາຟານາອຸມເພື່ອຊອກຫາພຣະອົງ. ເມື່ອພົບເຫັນພຣະອົງຢູ່ຟາກນັ້ນແລ້ວ, ພວກເຂົາທູນພຣະອົງວ່າ: “ພຣະອາຈານ, ທ່ານມາເຖິງທີ່ນີ້ເວລາໃດ?” ພຣະເຢຊູເຈົ້າກ່າວຕອບວ່າ: “ເຮົາບອກພວກເຈົ້າເປັນຄວາມຈິງວ່າ: ພວກເຈົ້າຊອກຫາເຮົາບໍ່ແມ່ນຍ້ອນໄດ້ເຫັນສິ່ງມະຫັດສະຈັນ, ແຕ່ຍ້ອນໄດ້ກິນປັງຢ່າງອີ່ມໜຳເທົ່ານັ້ນ. ພວກເຈົ້າຢ່າອອກແຮງຊອກຫາອາຫານທີ່ເສຍໄດ້, ແຕ່ໃຫ້ອອກແຮງຊອກຫາອາຫານທີ່ຖາວອນໝັ້ນຄົງຈົນເຖິງຊີວິດນິຣັນດອນ, ອັນແມ່ນອາຫານທີ່ບຸດມະນຸດຈະປະທານໃຫ້, ແມ່ນພຣະອົງນີ້ແລ້ວ ຊຶ່ງພຣະເຈົ້າພຣະບິດາໄດ້ຊົງປະທັບຕາມອບອຳນາດໃຫ້ແລ້ວ”.

ພວກເຂົາຈຶ່ງທູນພຣະອົງວ່າ: “ພວກເຮົາຈະທຳຢ່າງໃດເພື່ອຮ່ວມໃນວຽກການຂອງພຣະເປັນເຈົ້າ?” ພຣະເຢຊູເຈົ້າກ່າວຕອບວ່າ: “ວຽກການຂອງພຣະເປັນເຈົ້າຄື ໃຫ້ພວກເຈົ້າເຊື່ອເຖິງພຣະອົງຜູ້ທີ່ພຣະເຈົ້າໄດ້ສົ່ງມາ”. ພວກເຂົາຈຶ່ງທູນຖາມພຣະອົງວ່າ: “ທ່ານຈະທຳສິ່ງອັດສະຈັນອັນໃດໃຫ້ພວກເຮົາເຫັນ ເພື່ອໃຫ້ພວກເຮົາເຊື່ອ? ທ່ານຈະທຳສິ່ງໃດ?” ຢູ່ທີ່ປ່າວພວກບັນພະບຸຣຸດຂອງພວກເຮົາໄດ້ກິນມັນນາ ຕາມທີ່ໄດ້ມີຈາລຶກໄວ້ໃນພຣະຄຳພີວ່າ: “ພຣະອົງໄດ້ປະທານປັງຈາກສະຫວັນມາໃຫ້ພວກເຂົາກິນ”.

ພຣະເຢຊູເຈົ້າຊົງຕອບວ່າ: “ເຮົາບອກພວກເຈົ້າເປັນຄວາມຈິງວ່າ: ບໍ່ແມ່ນໂມແຊໄດ້ທານປັງຈາກສະຫວັນໃຫ້ພວກເຈົ້າດອກ, ແຕ່ແມ່ນພຣະບິດາຂອງເຮົາຊົງປະທານປັງແທ້ຈາກສະຫວັນແກ່ພວກເຈົ້າ” ຍ້ອນວ່າ:ປັງຂອງພຣະເຈົ້າຄືຜູ້ທີ່ສະເດັດລົງມາຈາກສະຫວັນແລະບັນດານຊີວິດແກ່ໂລກ. ພວກເຂົາທູນພຣະອົງວ່າ: “ພຣະອົງເອີຍ ໂຜດປະທານປັງນັ້ນ ໃຫ້ພວກຂ້າພະເຈົ້າສະເໝີເຖີດ”. ພຣະເຢຊູເຈົ້າກ່າວຕອບວ່າ: “ເຮົານີ້ເອງ ແມ່ນປັງປະທານຊີວິດ. ຜູ້ທີ່ມາຫາເຮົາ ຈະບໍ່ອຶດຢາກອີກເລີຍ, ແລະຜູ້ທີ່ເຊື່ອໃນເຮົາ ຈະບໍ່ຫອດຫິວຕະຫລອດໄປ”.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ: ຢງ 6, 24-35**

ໃນບົດອ່ານທີໜຶ່ງຈາກໜັງສືອົບພະຍົບ, ພວກເຮົາເຫັນວ່າສິ່ງທີ່ປະຊາກອນຂອງພຣະເຈົ້າມີຄວາມກັງວົນແລະຖືເປັນສິ່ງສຳຄັນນັ້ນຄືອາຫານການກິນ. ເຖິງແມ່ນວ່າພວກເຂົາຈະຫວິດຈາກການເປັນຂ້ອຍທາດຢູ່ປະເທດເອຢິບແລ້ວກໍຕາມ ແຕ່ພວກເຂົາຍັງມີຄວາມຜູກພັນກັບສະພາບຊີວິດເກົ່າ. ຍ້ອນພວກເຂົາໄດ້ກິນຢ່າງອີ່ມໜຳສຳລານ.

ໃນບົດພຣະວໍລະສານກໍດັ່ງດຽວກັນ, ຝູງຊົນຫລວງຫລາຍຊອກຫາພຣະເຢຊູເຈົ້າຍ້ອນພຣະອົງໄດ້ທະວີຂະໜົມປັງຫ້າກ້ອນແລະປາສອງໂຕເພື່ອລ້ຽງເກືອພວກເຂົາຢ່າງອີ່ມໜຳສຳລານ. ສິ່ງນີ້ສະທ້ອນໃຫ້ພວກເຮົາເຫັນວ່າມະນຸດມີຄວາມເປັນຫວ່ງກັງວົນເຖິງຊີວິດຝ່າຍກາຍຫລາຍກວ່າຊີວິດຝ່າຍຈິດ. ມະນຸດໃຫ້ຄວາມສຳຄັນກັບສິ່ງທີ່ສູນເສຍເປັນ ຫລາຍກວ່າສິ່ງທີ່ໝັ້ນຄົງຖາວອນ. ຍ້ອນຫຍັງ? ຍ້ອນພວກເຂົາຢຸດແຕ່ໃນສິ່ງທີ່ພວກເຂົາເຫັນແລະພວກເຂົາຊອກຫາ. ແຕ່ພວກເຂົາບໍ່ຮູ້ຈັກເຖິງທີ່ມາແລະບໍ່ເກີດແຫ່ງຊີວິດຂອງພວກເຂົາ. ເພາະສະນັ້ນ, ພຣະເຢຊູເຈົ້າຈຶ່ງກ່າວວ່າ: ບໍ່ແມ່ນໂມແຊທີ່ປະທານປັງຈາກສະຫວັນໃຫ້ພວກເຈົ້າ ,ແຕ່ແມ່ນພຣະບິດາຂອງເຮົາທີ່ປະທານປັງແທ້ຈາກສະຫວັນແກ່ພວກເຈົ້າ. ແລະບັນພະບຸລຸດຂອງພວກເຈົ້າທີ່ຮັບກິນປັງຢູ່ທະເລຊາຍ ແລ້ວກໍຕ້ອງຕາຍ. ແຕ່ປັງທີ່ເຮົາປະທານໃຫ້ພວກເຈົ້ານັ້ນຈະໃຫ້ພວກເຈົ້າມີຊີວິດແລະແມ່ນຊີວິດທີ່ໝັ້ນຄົງຖາວອນ. ໝາຍວ່າຊີວິດທີ່ພວກເຮົາໄດ້ຮັບໃນແຕ່ລະວັນນັ້ນບໍ່ໄດ້ມາຈາກມະນຸດ, ແຕ່ມາຈາກພຣະເຈົ້າ. ແລະສະບຽງອາຫານທີ່ຫລໍ່ລ້ຽງຮ່າງກາຍຂອງພວກເຮົາໃນແຕ່ລະມື້ນັ້ນບໍ່ໄດ້ມາຈາກຜົນງານແລະຄວາມສາມາດຂອງພວກເຮົາເທົ່ານັ້ນ, ແຕ່ແມ່ນພຣະເຈົ້າປະທານໃຫ້ພວກເຮົາ. ແລະເປົ້າໝາຍຊີວິດຂອງມະນຸດບໍ່ໄດ້ຢຸດຢູ່ແຕ່ໃນໂລກນີ້, ແຕ່ຢູ່ໃນໂລກໜ້າບ່ອນທີ່ມະນຸດຈະຢູ່ຮ່ວມສຸກກັບພຣະເຈົ້າຕະຫລອດໄປ.

ເມື່ອພວກເຮົາເຂົ້າໃຈດັ່ງນີ້ແລ້ວ, ແນ່ນອນສິ່ງທີ່ພວກເຮົາຊອກຫາບໍ່ແມ່ນອາຫານຢູ່ໃນໂລກນີ້, ແຕ່ແມ່ນອາຫານທິບທີ່ລົງມາຈາກສະຫວັນ. ແລະພວກເຮົາສາມາດຮັບກິນອາຫານທິບນີ້ໄດ້ໃນງານລ້ຽງຂອງພຣະຊຸມພານ້ອຍ ອັນແມ່ນມະຫາບູຊາມິຊຊານັ້ນເອງ.

**ພາວະນາ**

ໂອພຣະເຢຊູເຈົ້າ, ຂໍໃຫ້ວາຈາຂອງພຣະອົງວັນນີ້ຊ່ວຍລູກໃຫ້ຫິວກະຫາຍແຕ່ອາຫານທີ່ມາຈາກສະຫວັນອັນແມ່ນ ວາຈາ, ພຣະກາຍແລະພຣະໂລຫິດຂອງພຣະອົງ. ເພາະມີແຕ່ພຣະອົງເທົ່ານັ້ນທີ່ມີວາຈາບັນດານຊີວິດ. ອາແມນ

ຄຸນພໍ່ ອົງຕວນ ກຽດຕິສັກ